University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Care work: the invisible backbone of societies and economies**

ວຽກງານການດູແລ: ກະດູກສັນຫຼັງທີ່ເບິ່ງບໍ່ເຫັນຂອງສັງຄົມ ແລະ ເສດຖະກິດ

**Short description:**
ອ່ານວິທີທີ່ Yamila Pita ອະທິບາຍຄວາມກ່ຽວຂ້ອງຂອງວຽກງານການດູແລ ແລະ ຄວາມຈຳເປັນໃນການແກ້ໄຂບັນຫາຜ່ານນະໂຍບາຍສາທາລະນະ.

**Content:**

ວຽກງານການຈະເລີນພັນໝາຍເຖິງວຽກງານການດູແລທີ່ກໍ່ໃຫ້ເກີດການເປັນຢູ່ທີ່ດີຂອງກຸ່ມຄອບຄົວ ແລະ ສັງຄົມໂດຍທົ່ວໄປ. ໃນບົດຄວາມນີ້, ພວກເຮົາຈະໄດ້ເຫັນເຖິງຄວາມສໍາຄັນຂອງວຽກງານການດູແລສໍາລັບການພັດທະນາສັງຄົມ ແລະ ການເຕີບໂຕທາງເສດຖະກິດ, ດັ່ງນັ້ນ ຈຶ່ງຈໍາເປັນຕ້ອງກໍານົດນະໂຍບາຍສາທາລະນະທີ່ກ່າວເຖິງບັນຫາວຽກງານການດູແລ. ດ້ວຍເຫດນີ້ ພວກເຮົາຈະໄດ້ນໍາໃຊ້ແນວຄວາມຄິດຂອງເສດຖະກິດການດູແລ ແລະ ການດູແລວິທີຮູບເພັດ (care diamond).

ວຽກງານການດູແລ ປະກອບມີທັງວຽກງານການດູແລທາງກົງ (ເຊັ່ນ ເບິ່ງແຍງເດັກນ້ອຍ, ຜູ້ສູງອາຍຸ, ຄົນທີ່ປ່ວຍທາງຮ່າງກາຍ ແລະ ຈິດໃຈ ຫຼື ພິການ) ແລະ ວຽກງານການດູແລທາງອ້ອມ ຫຼື ວຽກປະຈໍາວັນໃນຄອບຄົວ (ເຊັ່ນ ການປຸງແຕ່ງອາຫານ, ການຊັກເຄື່ອງ ຫຼື ອະນາໄມ). ວຽກງານການດູແລ ສາມາດເປັນວຽກທີ່ໄດ້ຮັບຄ່າຈ້າງ (ເຊັ່ນດຽວກັບພະນັກງານເຮັດວຽກໃນຄົວເຮືອນ ຫຼື ພະນັກງານດູແລ ເຊັ່ນ ຄູສອນ ຫຼື ພະຍາບານ) ຫຼື ເປັນວຽກທີ່ບໍ່ໄດ້ຮັບຄ່າຈ້າງ ເມື່ອວຽກນັ້ນດໍາເນີນຢູ່ໃນລະດັບຄອບຄົວ ຫຼື ຊຸມຊົນ (ILO, 2018[1]; OXFAM, 2020).

ເຖິງຢ່າງໃດກໍຕາມ, ວຽກງານການດູແລກໍຍັງຄົງເປັນວຽກທີ່ບໍ່ມີຄ່າຈ້າງ ແລະ ເບິ່ງບໍ່ເຫັນ. ນອກຈາກນັ້ນ, ເນື່ອງຈາກການແບ່ງແຍກເພດຂອງແຮງງານຍັງດໍາເນີນໄປຢ່າງຕໍ່ເນື່ອງ ແມ່ຍິງ ແລະ ເດັກຍິງຈຶ່ງເຮັດວຽກດູແລເປັນສ່ວນໃຫຍ່.
ວຽກງານການດູແລທີ່ບໍ່ໄດ້ຮັບຄ່າຈ້າງຈຶ່ງເປັນປັດໃຈໜຶ່ງທີ່ກໍານົດການແຊກຊຶມຂອງແມ່ຍິງໃນຕະຫຼາດແຮງງານ ແລະ ໃນຄຸນນະພາບຂອງວຽກທີ່ເຂົາເຈົ້າສາມາດເຂົ້າເຖິງໄດ້.

---

[1] L. Addati, U. Cattaneo, V. Esquivel and I. Valarino (2018). Care Work and Care Jobs for the Future of Decent Work. Geneva: International Labour Organisation.




ແນວຄວາມຄິດຂອງເສດຖະກິດການດູແລກວມເອົາບັນດາໜ້າວຽກທັງໝົດທີ່ຈັດຢູ່ໃນໝວດວຽກງານການດູແລທີ່ບໍ່ໄດ້ຮັບຄ່າຈ້າງ. ຜ່ານແນວຄວາມຄິດດັ່ງກ່າວນີ້ ພວກເຮົາສາມາດເຊື່ອມໂຍງແນວຄິດເລື່ອງການດູແລເຂົ້າກັບແນວຄິດເລື່ອງເສດຖະກິດ, ເນັ້ນໜັກວ່າວຽກງານການດູແລທີ່ບໍ່ໄດ້ຮັບຄ່າຈ້າງກໍ່ໃຫ້ເກີດ ຫຼື ຊ່ວຍສ້າງມູນຄ່າທາງເສດຖະກິດ. ນອກຈາກນັ້ນ, ວຽກງານປະເພດນີ້ມີສ່ວນຊ່ວຍໃນການເຕີບໂຕຂອງເສດຖະກິດໂດຍຜ່ານການຖອດແບບຂອງກຳລັງແຮງງານທີ່ເໝາະສົມ ແລະ ມີຄວາມສາມາດ (UNRISD, 2010). ການຮັບຮູ້ບົດບາດ ແລະ ຄຸນຄ່າທີ່ວຽກງານການດູແລມີຕໍ່ສັງຄົມ ແລະ ເສດຖະກິດແມ່ນບາດກ້າວທຳອິດໃນການເຮັດໃຫ້ວຽກດັ່ງກ່າວເປັນທີ່ເບິ່ງເຫັນໄດ້ ແລະ ນຳມາພິຈາລະນາເຂົ້າໃນບັນດາຂະບວນການທາງນະໂຍບາຍ (Esquivel, 2013[2]).

ໂດຍຖືວ່າການດູແລ ເປັນຮາກຖານຂອງການພັດທະນາທັງດ້ານສັງຄົມ ແລະ ເສດຖະກິດ, ມີຄວາມຈຳເປັນຕ້ອງໄດ້ຮັບການແກ້ໄຂ ຜ່ານທາງນະໂຍບາຍສາທາລະນະ. ໃນຄວາມໝາຍນີ້, ແນວຄວາມຄິດຂອງ ການດູແລວິທີຮູບເພັດ (care diamond)ໄດ້ຊ່ວຍໃຫ້ພວກເຮົາຮັບຮູ້ວ່າສະຖາບັນໃດທີ່ມີສ່ວນຮ່ວມໃນການອອກແບບ, ສະໜອງທຶນ ແລະ ສົ່ງມອບການດູແລດັ່ງກ່າວ (UNRISD, 2010).

ຄວາມຮັບຜິດຊອບຕ່າງໆໃນການດູແລ ຈະກະຈາຍໄປຕາມເສົາຫຼັກສີ່ເສົາທີ່ແຕກຕ່າງກັນ ເຊັ່ນ: ຄົວເຮືອນ ແລະ ຄອບຄົວ, ລັດ, ຕະຫຼາດ ແລະ ຂະແໜງການບໍ່ຫວັງຜົນກຳໄລ. ລັດມີບົດບາດສະເພາະໃນໂຄງການນີ້ ເນື່ອງຈາກວ່າ ບໍ່ພຽງແຕ່ເຮັດໜ້າທີ່ເປັນຜູ້ໃຫ້ການດູແລເທົ່ານັ້ນ ແຕ່ຍັງເປັນຜູ້ມີອຳນາດໃນການຕັດສິນໃຈນຳອີກ. ນີ້ໝາຍຄວາມວ່າ ລັດສາມາດມີອິດທິພົນຕໍ່ກັບບັນດາສິດທິ ແລະ ຄວາມຮັບຜິດຊອບຂອງເສົາຄ້ຳຫຼັກອື່ນໆໄດ້.

ໂດຍການປະຕິບັດນະໂຍບາຍການດູແລ (ເຊັ່ນ ນະໂຍບາຍທີ່ມຸ່ງໝາຍ ສ້າງ, ຄຸ້ມຄອງ ແລະ ສະໜັບສະໜູນດ້ານການເງິນແກ່ການບໍລິການດູແລ), ມີຄວາມເປັນໄປໄດ້ທີ່ຈະຊ່ວຍຫຼຸດຜ່ອນເວລາ ແລະ ພາລະຂອງຜູ້ໃຫ້ການດູແລທີ່ບໍ່ໄດ້ຮັບຄ່າຈ້າງ.
ເປັນສິ່ງສຳຄັນທີ່ຄວນເອົາໃຈໃສ່ກໍ່ການອອກແບບນະໂຍບາຍເຫຼົ່ານັ້ນ
ເພື່ອຫຼີກລ່ຽງການເພີ່ມທະວີຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍໃນການກະຈາຍການດູແລ (Esquivel, 2013; UNRISD, 2010).

---

2 Esquivel, Valeria (2013). Care in Households and Communities. Oxfam Research Reports. Oxford: OXFAM.

University of Basel

ພວກເຮົາຂໍເຊີນທ່ານແບ່ງປັນຄວາມຄິດເຫັນຕໍ່ກັບບັນຫາຂອງວຽກການດູແລ ແລະ ຄວາມກ່ຽວຂ້ອງຕໍ່ກັບການມີສ່ວນຮ່ວມຂອງຕະຫຼາດແຮງງານ ແລະ ຝາກຄຳຄິດເຫັນ ແລະ ມີຄຳຖາມຕໍ່ກັບຫົວຂໍ້ດັ່ງກ່າວ!

**Downloads:**


United Nations Research Institute for Social Development (UNRISD) (2010). Why Care Matters for Social Development. Research and Policy Brief 9. Geneva: UNRISD.

OXFAM (2020). Time to care: Unpaid and underpaid care work and the global inequality crisis. Oxfam Briefing Paper. Oxford: OXFAM.